ຂ່າວ NEWS
ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ສຳນັກງານປົກປ້ອງເງິນຝາກ ຈັດຕັ້ງການສະຫຼຸບວຽກງານ 9 ເດືອນ




ສຳນັກງານປົກປ້ອງເງິນຝາກ (ສປງ) ໄດ້ຕັ້ງຈັດພິທີສະຫຼູບການເຄື່ອນໄຫວວຽກງານ 9 ເດືອນຂອງປີ 2020 ແລະ ເນື່ອງໃນໂອກາດວັນສ້າງຕັ້ງ ສປງ ຄົບຮອບ 21 ປີ (ວັນທີ 23 ກັນຍາ 1999-ວັນທີ 23 ກັນຍາ 2020) ໃນວັນທີ 25 ກັນຍາ 2020 ທີ່ສະຖາບັນການທະນາຄານ ທະນາຄານແຫ່ງ ສປປ ລາວ (ທຫລ) ໂດຍການໃຫ້ກຽດເຂົ້າຮ່ວມຂອງທ່ານ ພຸດທະໄຊ ສີວິໄລ ກຳມະການປະຈຳພັກ, ຮອງຜູ້ວ່າການ ທຫລ, ປະທານສະພາບໍລິຫານ ສປງ; ທ່ານ ນາງ ແສງດາວວີ ວົງຄຳຊາວ ກຳມະການພັກ ທຫລ, ຫົວໜ້າ ສປງ ແລະ ມີຄະນະກຳມະການສະພາບໍລິຫານ, ຄະນະ ສປງ-ຄະນະກົມພາຍໃນ ທຫລ, ຜູ້ຕາງໜ້າທະນາຄານທຸລະກິດກ່ວາ 40 ແຫ່ງ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ 100 ທ່ານ.

ໃນພິທີອັນມີຄວາມໝາຍ ແລະ ສຳຄັນນີ້; ທ່ານ ນາງ ແສງດາວວີ ວົງຄຳຊາວ ຫົວໜ້າ ສປງ ໄດ້ຍົກໃຫ້ເຫັນຜົນງານການເຄື່ອນໄຫວໃນຕະຫຼອດ 21 ປີ ຜ່ານມາ ໂດຍສະເພາະ 9 ເດືອນຂອງປີ 2020 ໂດຍພາຍໃຕ້ການຊີ້ນຳ-ນຳພາຢ່າງໃກ້ຊິດຈາກຄະນະພັກ-ຄະນະຜູ້ວ່າການ ທຫລ ກໍ່ຄືສະພາບໍລິຫານ, ສປງ ມີຄວາມເຕີບໃຫຍ່ຂະຫຍາຍຕົວທາງດ້ານປະລິມານ ແລະ ຄຸນນະພາບຈາກການປະຕິບັດໜ້າທີ່ການເມືອງຂອງຕົນທີ່ໄດ້ຮັບການມອບໝາຍ ຊຶ່ງສະແດງໃຫ້ເຫັນຜົນງານທີ່ພົ້ນເດັ່ນຫຼາຍດ້ານເຊັ່ນ: ໄດ້ສຳເລັດການປັບປຸງແຜນຍຸດທະສາດໄລຍະ 10 ປີ 2016-2025 ແລະ ວິໄສທັດຮອດປີ 2030 ເຂົ້າໃນແຜນຍຸດທະສາດລວມຂອງຂະແໜງການເງິນ-ເງິນຕາຂອງ ສປປ ລາວ, ສຳເລັດການສ້າງ ແລະ ອອກນິຕິກຳຈຳນວນໜຶ່ງ ເພື່ອຮັບໃຊ້ການເຄື່ອນໄຫວວຽກງານປົກປ້ອງເງິນຝາກເປັນຕົ້ນອອກຕົກລົງວ່າດ້ວຍອັດຕາເບ້ຍປະກັນເງິນຝາກ, ຂໍ້ຕົກລົງວ່າດ້ວຍວົງເງິນປົກປ້ອງໄດ້ປັບຈາກ 3 ສະກຸນເງິນ (28 ລ້ານກີບ, 36 ພັນບາດ ແລະ 1.200 ໂດລາສະຫະລັດ) ມາເປັນລວມທຸກສະກຸນເງິນ ທຽບເທົ່າກີບ 50 ລ້ານກີບຕໍ່ຜູ້ຝາກເງິນໜຶ່ງລາຍ ຕໍ່ສະມາຊິກໜຶ່ງແຫ່ງ; ແຈ້ງການແນະນຳວິທີການຄິດໄລ່ ແລະ ການຈ່າຍເບ້ຍປະກັນເງິນຝາກ; ຄຳແນະນຳກ່ຽວກັບການຄຸ້ມຄອງ ແລະ ຢັ້ງຢືນການເປັນສະມາຊິກ ສປງ; ນອກນີ້ ຍັງໄດ້ອອກຂໍ້ຕົກລົງວ່າດ້ວຍການຮັບເອົາທະນາຄານ ໄຕ້ຫວັນ ໂຄໂອເປີເຣທີບ ຈຳກັດ ສາຂານະຄອນຫຼວງວຽງຈັນ ເຂົ້າເປັນສະມາຊິກ ທີ 41 ຂອງ ສປງ ແລະ ໄດ້ອອກຂໍ້ຕົກລົງວ່າດ້ວຍການຮັບເອົາສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ປະຕູຄຳ ເຂົ້າເປັນສະມາຊິກແຫ່ງທຳອິດຂອງ ສປງ. ດ້ານວຽກງານໂຄສະນາ ສປງ ສຳເລັດການຄົ້ນຄວ້າ ແລະ ພັດທະນາເວັບໄຊທ໌ ພ້ອມທັງກະກຽມຂໍ້ມູນຂ່າວສານ ເພື່ອເຜີຍແຜ່ລົງເວັບໄຊທ໌ຂອງ ສປງ ແລະ ຄາດຄະເນວ່າ ຈະເຜີຍແຜ່ສູ່ສັງຄົມໃນຕົ້ນປີ 2021.





ພ້ອມດຽວກັນນັ້ນ; ໃນໂອກາດພິທີສະເຫຼີມສະຫຼອງວັນສ້າງຕັ້ງ ສປງ ຄົບຮອບ 21 ປີ, ທ່ານຫົວໜ້າ ສປງ ຍັງໄດ້ໃຫ້ກຽດມອບໃບຢັ້ງຢືນການເປັນສະມາຊິກຄືນໃໝ່ໃຫ້ແກ່ສະມາຊິກທີ່ເປັນທະນາຄານທຸລະກິດຂອງ ສປງ ຈຳນວນ 41 ແຫ່ງ ເພື່ອປ່ຽນແທນໃບຢັ້ງຢືນເກົ່າ ພາຍຫຼັງ ສປງ ໄດ້ປະກາດນຳໃຊ້ສັນຍາລັກໂລໂກ້ຂອງຕົນຢ່າງເປັນທາງການຊຶ່ງໂລໂກ້ທີ່ສະແດງຢູ່ໃບຢັ້ງຢືນກາຍເປັນສັນຍາລັກບົ່ງບອກວ່າ ທະນາຄານທຸລະກິດ ຫຼື ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກນັ້ນ ເປັນສະມາຊິກທີ່ຖືກຕ້ອງຕາມລະບຽບການຂອງ ສປງ. ສະນັ້ນ, ຜູ້ຝາກເງິນສາມາດສັງເກດໄດ້ຢູ່ບໍລິເວນປ່ອງບໍລິການລູກຄ້າຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກດັ່ງກ່າວ.

ພິເສດ ໃນຕອນທ້າຍຂອງພິທີໃນຄັ້ງນີ້, ໄດ້ຮັບຟັງການໂອ້ລົມຂອງທ່ານ ພຸດທະໄຊ ສີວິໄລ ກຳມະການປະຈຳພັກ, ຮອງຜູ້ວ່າການ ທຫລ, ປະທານສະພາບໍລິຫານ ສປງ ໄດ້ກ່າວສະແດງຄຳຍ້ອງຍໍ-ຊົມເຊີຍຕໍ່ຜົນງານໃນຫຼາຍໆດ້ານທີ່ ສປງ ຍາດມາໄດ້ໃນຜ່ານມາຊຶ່ງເຫັນວ່າກົງຈັກການຈັດຕັ້ງ, ຖານະການເງິນມີການປັບປຸງ ແລະ ພັດທະນາເທື່ອລະກ້າວ, ການສະສົມຄັງປົກປ້ອງມີການເຕີບໃຫຍ່ຂະຫຍາຍຕົວຂຶ້ນເລື້ອຍໆ ແລະ ການຮ່ວມມືສາກົນທັງໃນກອບສອງຝ່າຍ ແລະ ຫຼາຍຝ່າຍໄດ້ມີການພົວພັນຢ່າງກວ້າງຂວາງ. ຢ່າງໃດກໍດີ, ເມື່ອທຽບໃສ່ຄວາມຮຽກຮ້ອງຕ້ອງການຂອງວຽກງານກໍຄືອີງໃສ່ສະພາບເສດຖະກິດປະຈຸບັນ ສປງ ຕ້ອງໄດ້ຕັ້ງໜ້າບຸກບືນຢ່າງແຂງແຮງກ່ວາເກົ່າ, ໃນນີ້ ຕ້ອງນຳພາການເມືອງແນວຄິດໃຫ້ແກ່ພະນັກງານຢ່າງໜັກແໜ້ນ, ມີສະຕິຕໍ່ລະບຽບວິໄນ ແລະ ປະຕິບັດຫຼ້ອນໜ້າທີ່ຂອງຕົນ, ດ້ານວຽກງານວິຊາສະເພາະ ແມ່ນຕ້ອງເປີດກວ້າງຮັບສະຖາບັນການເງິນທີ່ຮັບເອົາເງິນຝາກເຂົ້າເປັນສະມາຊິກ; ເພີ່ມການປະສານສົມທົບບັນດາກົມກ່ຽວຂ້ອງຂອງ ທຫລ ເພື່ອເກັບກຳສະພາບຂອງສະມາຊິກ. ພ້ອມນີ້, ໃນອະນາຄົດຕ້ອງຄົ້ນຄວ້າກົນໄກການເກັບເບ້ຍປະກັນເງິນຝາກຕາມປະເພດຄວາມສ່ຽງ ຄຽງຄູ່ກັນກັບການຖອດຖອນບົດຮຽນຈາກຫຼາຍໆປະເທດທີ່ມີລະບົບປະກັນໄພເງິນຝາກທີ່ກ້າວໜ້າ ແລະ ສືບຕໍ່ເພີ່ມການໂຄສະນາວຽກງານປົກປ້ອງເງິນຝາກໃຫ້ສັງຄົມໄດ້ຮັບຮູ້ຢ່າງກວ້າງຂວາງ ແລະ ທົ່ວເຖິງ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

## ໃຊ້ເງິນກີບທົ່ວທັງຊາດສ້າງປັດບາດຄ່າເງິນກີບລາວ